ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ                                        ເລກທີ 1356/ ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ 9.9.2016

ແຈ້ງການ

ຮຽນ : - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

- ທ່ານລັດຖະມົນຕີກະຊວງອຸດສາຫະ ແລະ ການຄ້າ.

ເລື່ອງ : ລາຍການ(ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

- ອີງຕາມການລາຍງານຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ລາຍງານຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ດັ່ງວັນທີ 29 ສິງຫາ 2016.

- ອີງຕາມການຊີ້ນຳ ແລະ ຕົກລົງໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ດັ່ງວັນທີ 29 ສິງຫາ 2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

" ໂດຍພື້ນຖານແມ່ນເຫັນດີຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບລາຍການຜະລິດຕະພັນໄມ້ອະນຸມັດໃຫ້ສົ່ງອອກ ແລະ ບໍ່ອະນຸມັດໃຫ້ສົ່ງອອກ, ແຕ່ໃຫ້ປັບປຸງລາຍການຜະລິດຕະພັນໄມ້ ທີ່ມີຄວາມສ່ຽງ (ເປັນຊ່ອງຫວ່າງ) ໃນການຄຸ້ມຄອງການສົ່ງອອກ ຕາມການຕົກລົງຂອງກະປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ. ສຳລັບການຈັດຕັ້ງປະຕິບັດຕົວຈິງ ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງການເງິນ ເປັນຜູ້ຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຂະແໜງການຕົນຢ່າງເຂັ້ມງວດ. "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ :

- ນາຍົກ-ຮອງນາຍົກ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ເກັບມ້ຽນ 08 ສະບັບ